ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------=====0000=====--------------

ສານປະຊາຊົນແຂວງຫຼວງພະບາງ ເລກທີ 008/ຂຕ.ພ

ຄະນະສານແພ່ງ ລົງວັນທີ 10 ສິງຫາ 2016

ຂັ້ນຕົ້ນ

# ຄໍາສັ່ງອາຍັດຊັບ

ຄະນະສານແພ່ງຂອງສານປະຊາຊົນແຂວງຫຼວງພະບາງ ຊຶ່ງປະກອບດ້ວຍ:

ທ່ານ ພອນປະເສີດ ຈັນທະພອນ ປະທານ

ທ່ານ ບຸນທະວີ ສີລັດຕະນະ ຄະນະ

ທ່ານ ຈັນສະໄໝ ພະລາກອນ ຄະນະ

ນັ່ງພ້ອມດ້ວຍ ທ່ານ ສອນເພັດ ພັນທະສິນ ຈ່າສານ

ໄດ້ເປີດປະຊຸມສານຂຶ້ນໃນວັນທີ 10 ສິງຫາ 2016 ເວລາ 9 ໂມງ 30 ນາທີ, ຢູ່ທີ່ຫ້ອງປະຊຸມສານປະຊາຊົນແຂວງຫຼວງພະບາງ ເພື່ອພິຈາລະນາໃບສະເໜີ ສະບັບເລກທີ 031/ບຄ.ບກ, ລົງວັນທີ 4 ກໍລະກົດ 2016 ຂອງທ້າວ ບຸນທະວີ ຄໍລະຍົກ (ທະນາຍຄວາມຜູ້ຕາງໜ້າໂຈດ) ທີ່ໄດ້ສະເໜີໃຫ້ສານສັ່ງກວດກາອາຍັດທີ່ດິນ ແລະ ເຮືອນ ຕັ້ງຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ, ບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ອອກຊື່ນາງ ບຸນທັນ ລັກປະສິດ (ຈໍາເລີຍ).

ເຫັນຕາມ ສໍານວນຄະດີແພ່ງ ເລກທີ 17/ຂຕ.ພ, ລົງວັນທີ 11 ທັນວາ 2015.

ລະຫວ່າງ

ທ້າວ ເພັດຈໍາພອນ ຊຸນດາລາ ອາຍຸ 52 ປີ, ສັນຊາດ ລາວ, ອາຊີບ ນັກທຸລະກິດ, ປັດຈຸບັນຢູ່ໜ່ວຍ 02, ເຮືອນເລກທີ 22, ບ້ານຊຽງທອງ, ເມືອງຫຼວງພະບາງ ແຂວງຫຼວງພະບາງ..................ໂຈດ.

ນາງ ບຸນທັນ ອາຍຸ 58 ປີ, ສັນຊາດລາວ, ອາຊີບ ຄ້າຂາຍ, ປັດຈຸບັນຢູ່ໜ່ວຍ 05, ເຮືອນເລກທີ 90, ບ້ານສັງຄະໂລກ, ເມືອງຫຼວງພະບາງ ແຂວງຫຼວງພະບາງ..........................................ຈໍາເລີຍ.

ທ້າວ ບຸນທະວີ ຄໍລະຍົກ (ທະນາຍຄວາມຜູ້ຕາງໜ້າໂຈດ).

ກ່ຽວເລື່ອງ: ທວງເອົາເງິນຄືນ

**ສານ**

ໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ອີງຕາມສິດ ແລະ ໜ້າທີ່ຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນສະບັບປັບປຸງປີ 2009.

## ເນື້ອຄະດີ

ເຫັນຕາມ ເນື້ອໃນໃບຄຳຮ້ອງຟ້ອງ ສະບັບລົງວັນທີ 20 ພະຈິກ 2015 ຂອງທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໂດຍອ້າງເຫດຜົນວ່າ: ໃນເບື້ອງຕົ້ນນາງ ບຸນທັນ (ຈຳເລີຍ) ໄດ້ມາສະເໜີຂາຍທີ່ດິນຢູ່ບ້ານສັງຄະໂລກ ຈຳນວນສອງຕອນ ຈາກນັ້ນຕົນ ແລະ ທ້າວ ແສງວົງຈິດ ຍາງວິໄລ ຈຶ່ງໄດ້ຕົກລົງຊື້ທີ່ດິນນຳນາງ ບຸນທັນ (ຈຳເລີຍ) ຈຳນວນສອງຕອນຄື: ຕອນທີໜຶ່ງ ມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ຕອນທີສອງ ມີເນື້ອທີ່ 1 ເຮັກຕາ 5868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ໃນມູນຄ່າ 9.600.000 ບາດ ຕາມສັນຍາການຊື້ຂາຍດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ແລະ ໄດ້ຕົກລົງຈ່າຍເງິນເປັນສາມງວດ, ງວດທີໜຶ່ງວັນທີ 9 ມັງກອນ 2012 ຈຳນວນ 3.000.000 ບາດ, ງວດທີສອງ ວັນທີ 1 ມັງກອນ 2013 ຈຳນວນ 3.000.000 ບາດ, ງວດທີສາມ ວັນທີ 1 ມັງກອນ 2014 ຈຳນວນ 3.600.000 ບາດ, ພາຍຫຼັງທີ່ພວກຕົນໄດ້ຈ່າຍເງິນຄ່າທີ່ດິນໃຫ້ນາງ ບຸນທັນ (ຈຳເລີຍ) ໝົດແລ້ວ ແລະ ນາງ ບຸນທັນ (ຈຳເລີຍ) ກໍໄດ້ໂອນໃບຕາດິນອອກເປັນຊື່ທ້າວ ເພັດຈຳພອນ ຊຸນດາລາ + ທ້າວ ແສງວົງຈິດ ຍາງວິໄລ ຫຼັງຈາກນັ້ນ ພວກຕົນກໍໄດ້ເຂົ້າໄປທຳການບຸກເບີກເອົາດິນມາຖົມ ແລະ ປັບໜ້າດິນໃຫ້ພຽງຈຳນວນໜຶ່ງ ແລ້ວກໍໄດ້ສະເໜີໃຫ້ພະນັກງານທີ່ດິນ ລົງໄປວັດແທກທີ່ດິນຂອບເຂດແດນຂອງດິນ ຈຶ່ງຮູ້ວ່າເນື້ອທີ່ດິນຕອນທີ່ສອງ ໃບຕາດິນເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5868 ຕາແມັດ ເທົ່ານັ້ນ ຕາມໃບຢັ້ງຢືນ ສະບັບເລກທີ 246/ຫຊສ.ຫຼບ, ລົງວັນທີ 11 ເມສາ 2015 ຂອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງຫຼວງພະບາງ ຫຼັງຈາກນັ້ນພວກຕົນກໍໄດ້ເຂົ້າໄປຫາ ນາງ ບຸນທັນ (ຈຳເລີຍ) ເພື່ອແຈ້ງໃຫ້ຜູ້ກ່ຽວຮັບຮູ້ວ່າ ເນື້ອທີ່ດິນຕົວຈິງຂອງດິນຕອນທີ່ສອງ ແລະ ສະເໜີໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າດິນໃນເນື້ອທີ່ 1 ເຮັກຕາ ທີ່ຂາດຫາຍໄປນັ້ນ ຄິດໄລ່ເປັນເງິນ ຈຳນວນ 5.952.055 ບາດ ຄືນໃຫ້ແກ່ພວກຕົນ ແຕ່ນາງ ບຸນທັນ (ຈຳເລີຍ) ປະຕິເສດບໍ່ຍອມສົ່ງເງິນຄືນໃຫ້ແກ່ພວກຕົນ ເມື່ອເຫດການເປັນແນວນັ້ນ ພວກຕົນຈຶ່ງໄດ້ຂຽນຄຳຮ້ອງຟ້ອງ ຂຶ້ນມາຍັງສານປະຊາຊົນແຂວງຫຼວງພະບາງ ເພື່ອທວງໃຫ້ນາງ ບຸນທັນ (ຈຳເລີຍ) ສົ່ງເງິນຄ່າດິນ ຈຳນວນ 5.952.055 ບາດ ຄືນໃຫ້ແກ່ພວກຕົນ.

ເຫັນຕາມເນື້ອໃນໃບຄຳແກ້ຟ້ອງ ສະບັບລົງວັນທີ 10 ທັນວາ 2015 ຂອງນາງ ບຸນທັນ (ຈຳເລີຍ) ໄດ້ອ້າງເຫດຜົນວ່າ: ໃນເດືອນມັງກອນ ປີ 2012 ຕົນໄດ້ຕົກລົງຂາຍທີ່ດິນ ຈຳນວນສອງຕອນ ຕັ້ງຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ຄື: ຕອນທີໜຶ່ງ ມີເນື້ອທີ່ 263 ຕາແມັດ ຕາມໃບຕາດິນ ສະບັບເລກທີ 217, ລົງວັນທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ແລະ ຕອນທີສອງ ມີເນື້ອທີ່ 1 ເຮັກຕາ 5868 ຕາແມັດ ຕາມໃບຕາດິນ ສະບັບເລກທີ 223, ລົງວັນ ທີ 12 ກັນຍາ 2003 ອອກຊື່ນາງ ບຸນທັນ (ຈຳເລີຍ) ໃນມູນຄ່າ 9.600.000 ບາດ ຈາກນັ້ນ ພວກຕົນກໍໄດ້ຕົກລົງເຮັດສັນຍາຊື້ຂາຍນຳກັນ ໂດຍຖືກຕ້ອງຕາມກົດໝາຍ ແລະ ຜ່ານອຳນາດການປົກຄອງທຸກຂັ້ນ ຕາມສັນຍາການຊື້ຂາຍດິນ ສະບັບເລກທີ 01/ສຄລ, ລົງວັນທີ 8 ມັງກອນ 2012 ແລະ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ຈ່າຍເງິນຕາມສັນຍາຊື້ຂາຍໝົດແລ້ວ ແລະ ໃບຕາດິນກໍໄດ້ໂອນເປັນກຳມະສິດຂອງຜູ້ຊື້ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໝົດແລ້ວ, ສ່ວນການທີ່

ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ຮ້ອງຟ້ອງຕົນຂຶ້ນມາຍັງສານປະຊາຊົນແຂວງພະບາງ ເພື່ອໃຫ້ຕົນສົ່ງເງິນຄ່າດິນຄືນ ຈຳນວນ 5.952.055 ບາດ ຊຶ່ງໄດ້ອ້າງວ່າດິນຕອນທີສອງ ຕາມໃບຕາດິນ ເລກທີ 223, ລົງວັນທີ 12 ກັນຍາ 2003 ມີເນື້ອທີ່ດິນຕົວຈິງພຽງແຕ່ 5868 ຕາແມັດ ຂາດຫາຍໄປ 1 ເຮັກຕານັ້ນ ຕົນແມ່ນບໍ່ຮັບຮູ້ເນື່ອງຈາກວ່າ: ໃບຕາດິນທັງສອງສະບັບນັ້ນເປັນໃບຕາດິນແຂບຄຳ ຊຶ່ງແມ່ນອົງການລັດກໍຄືຫ້ອງການຄຸ້ມຄອງທີ່ດິນ ແລະ ເຮືອນ ເປັນຜູ້ອອກໃຫ້, ກ່ອນຈະມີການຊື້ຂາຍຜູ້ຊື້ກໍໄດ້ໄປກວດກາຂອບເຂດຂອງທີ່ດິນຕົວຈິງແລ້ວ ແລະ ຕິດກັບທີ່ດິນຂອງໃຜແດ່ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ກໍຮັບຮູ້ ແລະ ເຫັນທີ່ດິນຕົວຈິງແລ້ວ ເພາະວ່າການຂາຍທີ່ດິນນັ້ນແມ່ນຂາຍຍົກ (ຂາຍທັງສອງຕອນພ້ອມກັນ) ໂດຍບໍ່ໄດ້ຂາຍເປັນຕາແມັດ ຖ້າວ່າເນື້ອທີ່ດິນຫາກບໍ່ຄົບຕາມທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ກ່າວອ້າງມານັ້ນ ຕົນກໍຈະຂາຍທີ່ດິນທັງສອງຕອນນັ້ນ ໃນລາຄາ 9.600.000 ບາດ ຄືເກົ່າດັ່ງນັ້ນ ຕົນຈະບໍ່ຂໍສົ່ງເງິນຄືນໃຫ້ຜູ້ກ່ຽວເດັດຂາດ, ການທີ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ໄດ້ຮ້ອງຟ້ອງທວງໃຫ້ຕົນສົ່ງເງິນຄ່າທີ່ດິນຄືນ ຈຳນວນ 5.952.055 ບາດນັ້ນ ເປັນການຄິດໄລ່ເອົາເອງ ໂດຍຄິດໄລ່ເປັນຕາແມັດ ຕົນແມ່ນບໍ່ຮັບຮູ້ ສະນັ້ນ ຕົນຈຶ່ງໄດ້ສະເໜີໃຫ້ສານປະຊາຊົນແຂວງຫຼວງພະບາງ ພິຈາລະນາຕັດສິນໃຫ້ຄວາມເປັນທຳແກ່ຕົນດ້ວຍ ເນື່ອງຈາກວ່າ: ການຊື້ຂາຍລະຫວ່າງຕົນກັບທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແມ່ນເຮັດຂຶ້ນດ້ວຍຄວາມບໍລິສຸດໃຈຂອງທັງສອງຝ່າຍ ໂດຍຜ່ານອຳນາດການປົກຄອງທຸກຂັ້ນ ແລະ ຖືກຕ້ອງຕາມຫຼັກການຂອງກົດໝາຍທຸກຢ່າງ ໂດຍຜ່ານທີ່ດິນ ແລະ ທະບຽນສານ, ຕົນຈະບໍ່ຍອມສົ່ງເງິນຄືນໃຫ້ແກ່ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ເດັດຂາດ.

**ວິນິດໄສ**

ຜ່ານການຄົ້ນຄວ້າພິຈາລະນາບັນດາຂໍ້ມູນຫຼັກຖານ ແລະ ເອກະສານຕ່າງໆ ພ້ອມທັງພິຈາລະນາຜົນຂອງການຕົກລົງໃນທີ່ປະຊຸມແລ້ວ.

ເຫັນວ່າໃບສະເໜີ ສະບັບເລກທີ 031/ບຄ.ບກ, ລົງວັນທີ 4 ກໍລະກົດ 2016 ຂອງທ້າວ ບຸນທະວີຄຳລະຍົກ (ໂຈດ) ທີ່ໄດ້ສະເໜີໃຫ້ສານແຕ່ງຕັ້ງຄະນະກຳມະການລົງກວດກາອາຍັດທີ່ດິນ ແລະ ເຮືອນຕັ້ງຢູ່ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ແລະ ບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ທີ່ອອກຊື່ນາງ ບຸນທັນ ລັກປະສິດ (ຈຳເລີຍ) ແມ່ນມີເຫດຜົນບາງສ່ວນເນື່ອງຈາກວ່າ: ທີ່ດິນ ແລະ ເຮືອນ ຕາມໃບທະບຽນທີ່ດິນ ເລກທີ 425 ໃບທີ່ 25 ລົງວັນທີ 10 ກຸມພາ 2015 ແຜນທີ່ດິນໃບທີ C196-193/03 ຕອນດິນເລກທີ 102 ມີເນື້ອທີ່ 372 ຕາແມັດອອກຊື່ນາງ ບຸນທັນ ລັກປະສິດ ຕັ້ງຢູ່ໜ່ວຍ 12 ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງໂດຍອີງໃສ່ບົດບັນທຶກການລົງກວດກາທີ່ດິນ ສະບັບລົງວັນທີ 26 ກໍລະກົດ 2016 ແລະ ບົດລາຍງານສະບັບເລກທີ 1543/ພຊສ.ຫຼບ, ລົງວັນທີ 9 ສິງຫາ 2016 ຂອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ ແລະ ບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງ ຂອງນາງ ບຸນທັນ ລັກປະສິດ (ຈຳເລີຍ) ຄື: 1,ບັນຊີເລກທີ 05212000949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 121,483.08 ກີບ; 2,ບັນຊີເລກທີ 052120100949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 898.90 ໂດລາ; 3,ບັນຊີເລກທີ 052120200949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 11,485. 78

ບາດ; 4,ບັນຊີເລກທີ 052660000949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 100,000,000.00 ກີບ; 5,ບັນຊີເລກທີ 057120000949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 112,740.82 ກີບ ປັດຈຸບັນສານປະຊາຊົນແຂວງຫຼວງພະບາງ ພວມດຳເນີນຄະດີດັ່ງກ່າວຢູ່ ສະນັ້ນ ເພື່ອຮັບປະກັນການຮ້ອງຟ້ອງ, ປົກປ້ອງຜົນປະໂຫຍດຂອງຄູ່ຄວາມ ແລະ ຮັບປະກັນໃນການດຳເນີນຄະດີຂອງສານ ຕາມມາດຕາ 123 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012 ດັ່ງນັ້ນ ຄະນະສານແພ່ງຂອງສານປະຊາຊົນແຂວງຫຼວງພະບາງ ຈຶ່ງຕົກລົງອາຍັດຊັບທີ່ດິນ ແລະ ເຮືອນ ຕາມໃບທະບຽນທີ່ດິນ ເລກທີ 425 ໃບທີ່ 25 ລົງວັນທີ 10 ກຸມພາ 2015 ແຜນທີ່ດິນໃບທີ C196-193/03 ຕອນດິນເລກທີ 102 ມີເນື້ອທີ່ 372 ຕາແມັດ ອອກຊື່ນາງ ບຸນທັນ ລັກປະສິດ ຕັ້ງຢູ່ໜ່ວຍ 12 ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ແລະ ບັນຊີເງິນຝາກຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງຄື: 1,ບັນຊີເລກທີ 052120000949886001 ອອກຊື່ນາງ ບຸນທັນ ມີເງິນຈຳນວນ 121,483.08 ກີບ; 2,ບັນຊີເລກທີ 052120100949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 898.90 ໂດລາ; 3,ບັນຊີເລກທີ 0521 20200949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 11,485.78 ບາດ; 4,ບັນຊີເລກທີ 052660000949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 100,000,000.00 ກີບ; 5,ບັນຊີເລກທີ 057120000 949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 112,740.82 ກີບ ພ້ອມດຽວກັນນີ້ແມ່ນຫ້າມໃຫ້ນາງ ບຸນທັນ ລັກປະສິດ (ຈຳເລີຍ) ທຳການຊື້ຂາຍ, ມອບໂອນ, ຍົກຊັບ, ມອບຊັບ, ຊວດຈຳ, ປຸກສ້າງ ແລະ ຖອນເງິນຕາມບັນຊີເລກທີດັ່ງກ່າວຈົນກວ່າຈະມີຄຳສັ່ງຂອງສານໃຫ້ປ່ຽນແປງ ຫຼື ລົບລ້າງ.

ເຫັນຕາມມາດຕາ 18 ຂອງກົດໝາຍວ່າດ້ວຍສານປະຊາຊົນສະບັບປັບປຸງ ປີ 2009.

ເຫັນຕາມມາດຕາ 123, 128, 129, 131 ແລະ ມາດຕາ 132 ຂອງກົດໝາຍວ່າດວ້ຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2012.

**ດ້ວຍເຫດນີ້**

ຄະນະສານແພ່ງ ຂອງສານປະຊາຊົນແຂວງຫຼວງພະບາງ ຈຶ່ງໄດ້ອອກຄຳສັ່ງອາຍັດຊັບເປັນຂັ້ນຕົ້ນ.

ບອກວ່າ: ອາຍັດຊັບທີ່ດິນ ແລະ ເຮືອນ ຕາມໃບທະບຽນທີ່ດິນ ເລກທີ 425 ໃບທີ່ 25 ລົງວັນທີ 10 ກຸມພາ 2015 ແຜນທີ່ດິນໃບທີ C196-193/03 ຕອນດິນເລກທີ 102 ມີເນື້ອທີ່ 372 ຕາແມັດ ອອກຊື່ນາງ ບຸນທັນ ລັກປະສິດ ຕັ້ງຢູ່ໜ່ວຍ 12 ບ້ານສັງຄະໂລກ ເມືອງຫຼວງພະບາງ ແຂວງຫຼວງພະບາງ ແລະ ບັນຊີເງິນຝາກ ຢູ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ສາຂາແຂວງຫຼວງພະບາງຄື: 1,ບັນຊີເລກທີ 052120000949886001 ອອກຊື່ນາງ ບຸນທັນ ມີເງິນຈຳນວນ 121,483.08 ກີບ; 2,ບັນຊີເລກທີ 052120100949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 898.90 ໂດລາ; 3,ບັນຊີເລກທີ 052120200949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 11,485.78 ບາດ; 4,ບັນຊີເລກທີ 052660000949886001 ອອກຊື່ນາງ ບຸນທັນ ລັກປະສິດ ມີເງິນຈຳນວນ 100,000,000.00 ກີບ; 5,ບັນຊີເລກທີ 057120000949886001ອອກຊື່ນາງ ບຸນທັນ ລັກປະສິດ ມີ

ເງິນຈຳນວນ 112,740.82 ກີບ ພ້ອມດອກເບ້ຍນີ້ແມ່ນຫ້າມໃຫ້ນາງ ບຸນທັນ ລັກປະເສີດ (ຈຳເລີຍ) ຊື້ຂາຍ, ມອບໂອນ, ຍົກຊັບ, ມອບຊັບ, ຊວດຈຳ, ປຸກສ້າງ ແລະ ຖອນເງິນຕາມບັນຊີເລກທີດັ່ງກ່າວຈົນກວ່າຈະມີຄຳສັ່ງຂອງສານໃຫ້ປ່ຽນແປງ ຫຼື ລົບລ້າງ.

ໄດ້ແຈ້ງໃຫ້ໂຈດ ແລະ ຈຳເລີຍ ຊາບແລ້ວ, ຖ້າຝ່າຍໃດບໍ່ພໍໃຈຕໍ່ຄຳສັ່ງສະບັບນີ້ ມີສິດຂໍອຸທອນໄດ້ພາຍໃນກຳນົດ 7 ວັນ ນັບແຕ່ວັນໄດ້ຮັບຊາບຄຳສັ່ງສະບັບນີ້ເປັນຕົ້ນໄປ.

**ປະທານຄະນະສານ** **ຈ່າສານ**

ພອນປະເສີດ ຈັນທະຟອນ

**ສອນເພັດ ພັນທະສິນ**